**ມິຊຊາອາທິດທີ 2 ກຳນົດບຳເພັນສິນປີ C**

**ວັນທີ 17 ມີນາ 2019**



**ພຣະວໍລະສານໂດຍນັກບຸນລູກາ 9, 28-36**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ພາເປໂຕ, ຢາໂກເບ ແລະຢວງຂຶ້ນໄປພາວະນາຢູ່ເທິງພູເຂົາ. ເວລາກຳລັງຊົງພາວະນາຢູ່ນັ້ນ ສີໜ້າຂອງພຣະອົງເຈົ້າກໍປ່ຽນໄປ, ເຄື່ອງທົງສ່ອງແສງຂາວຮຸ່ງເຮືອງ. ເວລານັ້ນມີບຸລຸດສອງຄົນມາສົນທະນາກັບພຣະອົງ, ແມ່ນໂມແຊ ແລະເອລີ ຜູ້ປະຈັກມາໃນແສງລັດສະໝີແລະເວົ້າເຖິງການຈາກໄປຂອງພຣະອົງທີ່ຈະສຳເລັດຢູ່ນະຄອນເຢລູຊາແລມ. ສ່ວນເປໂຕກັບໝູ່ພາກັນເຫງົານອນ, ພໍຊວາດຕື່ນຂຶ້ນກໍເຫັນແສງລັດສະໝີຂອງພຣະອົງ ແລະບຸລຸດທັງສອງຢືນຢູ່ກັບພຣະອົງ.

ຂະນະບຸລຸດທັງສອງຈະຈາກພຣະອົງໄປ, ເປໂຕຈຶ່ງທູນພຣະເຢຊູເຈົ້າວ່າ: ພຣະອາຈານເອີຍ! ພວກເຮົາຢູ່ນີ້ເກີນວ່າດີຫລາຍ, ພວກຂ້າພະເຈົ້າຈະປຸກຜາມຂຶ້ນສາມຫລັງ, ຫລັງໜຶ່ງຖະຫວາຍພຣະອົງ, ຫລັງໜຶ່ງຖະຫວາຍໂມແຊ ແລະອີກຫລັງໜຶ່ງຖະຫວາຍເອລີ. ເປໂຕເວົ້າໄປໂດຍບໍ່ຮູ້ຈັກວ່າຕົນໄດ້ເວົ້າຫຍັງ. ເວລາທີ່ເປໂຕກາບທູນຢູ່ນັ້ນ ກໍມີເມກກ້ອນໜຶ່ງລອຍມາປົກບັງທ່ານທັງສາມ ແລະເມື່ອທ່ານທັງສາມເຂົ້າໄປໃນເມກ ພວກສາວົກຕົກໃຈສະທ້ານຢ້ານກົວ. ເລີຍມີສຽງດັງມາຈາກເມກນັ້ນເວົ້າວ່າ: ຜູ້ນີ້ເປັນບຸດສຸດທີ່ຮັກຂອງເຮົາ ຈົ່ງເຊື່ອຟັງເພິ່ນເຖີດ. ເມື່ອໄດ້ຍິນສຽງນັ້ນ ກໍເຫັນແຕ່ພຣະເຢຊູເຈົ້າຜູ້ດຽວ. ພວກສາວົກທັງສາມໄດ້ພາກັນມິດ ແລະບໍ່ໄດ້ເລົ່າຫຍັງໃຫ້ຜູ້ໃດຟັງເຖິງເຫດການທີ່ໄດ້ເຫັນໃນວັນນັ້ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 9, 28-36**

ວັນອາທິດທີໜຶ່ງກໍານົດບໍາເພັນສິນທີ່ຜ່ານມາ ພວກເຮົາໄດ້ພ້ອມກັບພຣະເຢຊູເຈົ້າເຂົ້າໄປໃນທີ່ປ່ຽວ ພາຍໃຕ້ການນໍາພາຂອງພຣະຈິດເຈົ້າເພື່ອພາວະນາແລະບໍາເພັນຕົນເປັນເວລາ 40 ວັນ. ຫລາຍຄົນໃນພວກເຮົາກໍມີຄວາມມຸ່ງຫວັງຢາກກະທໍາບາງສິ່ງບາງຢ່າງໃນກໍານົດບໍາເພັນສິນນີ້ ເພື່ອສະແດງອອກເຖິງຄວາມປາດຖະໜາໃນການຫັນປ່ຽນຊີວິດຂອງຕົນເພື່ອກັບຄືນມາຫາພຣະເຈົ້າ. ບາງຄົນກໍຕັ້ງໃຈທີ່ຈະບໍ່ກິນສິ່ງທີ່ຕົນມັກ ເພື່ອສະແດງອອກເຖິງການຖືສິນອົດ. ບາງຄົນກໍຕັ້ງຈິດດຕັ້ງໃຈໃນເວລາສວດພາວະນາ ຍ້ອນວ່າຕົນໄດ້ເລີນເລີ້ແລະຖືເບົາໃນຊ່ວງເວລາທີ່ຜ່ານມາ. ບາງຄົນກໍຕັ້ງໃຈທີ່ຈະຄືນດີກັບຄົນທີ່ຕົນເຄີຍຫລັບຕາຊັງໃສ່ ເພື່ອສະແດງອອກເຖິງຄວາມຮັກເມດຕາຕໍ່ຄົນອື່ນ. ສິ່ງຕ່າງໆເຫລົ່ານີ້ລ້ວນແຕ່ເປັນສິ່ງທີ່ດີ. ແຕ່ສິ່ງສໍາຄັນຄືເຮັດແນວໃດຄວາມຕັ້ງໃຈຂອງພວກເຮົາຈະສືບຕໍ່ຈົນເຖິງເປົ້າໝາຍທີ່ຕົນໄດ້ຕັ້ງໄວ້? ຍ້ອນຫລາຍຄັ້ງພວກເຮົາເປັນເໝືອນພວກລູກສິດສາມຄົນທີ່ເຫງົານອນໃນເວລາພຣະເຢຊູເຈົ້າສວດພາວະນາ ດັ່ງທີ່ພຣະວໍລະສານກ່າວໃນວັນນີ້. ໝາຍຄວາມວ່າແນວໃດ? ໝາຍຄວາມວ່າພວກເຮົາຮູ້ສຶກເມື່ອຍຫລ້າ, ທໍ້ຖອຍ, ແລະໝົດກໍາລັງໃຈ. ເພາະສະນັ້ນ, ວັນນີ້ພຣະເຢຊູເຈົ້າຈຶ່ງໄດ້ສໍາແດງສີມຸງຄຸນຮຸ່ງເຮືອງຂອງພຣະອົງຢູ່ເທິງພູເຂົາ. ອັນແມ່ນການປ່ຽນສະພາບພຣະກາຍຂອງພຣະອົງໃຫ້ແຈ້ງຂາວສະອ່າງ. ເປັນຫຍັງພຣະກຣິສຕະຈັກຈຶ່ງເອົາບົດພຣະວໍລະສານຕອນນີ້ມາອ່ານແລະລໍາເພິງໃນວັນອາທິດທີສອງຂອງກໍານົດບໍາເພັນສິນ? ຍ້ອນວາຈາຂອງພຣະເຈົ້າຕອນນີ້ບໍ່ພຽງແຕ່ເປັນກໍາລັງໃຈຊຸກຍູ້ພວກເຮົາໃຫ້ສືບຕໍ່ເສັ້ນທາງທີ່ພວກເຮົາໄດ້ຕັ້ງໃຈໄວ້ໃຫ້ສໍາເລັດ, ແຕ່ວາຈາຂອງພຣະເຈົ້າວັນນີ້ຍັງເປັນເຄື່ອງໝາຍຊີ້ໃຫ້ພວກເຮົາເຫັນເສັ້ນໄຊແລະລາງວັນທີ່ພວກເຮົາຈະໄດ້ຮັບ ອັນແມ່ນການເຂົ້າຮ່ວມສີມຸງຄຸນກັບພຣະເຈົ້າ. ແຕ່ກ່ອນທີ່ຈະບັນລຸເຖິງເສັ້ນໄຊນັ້ນພວກເຮົາຕ້ອງໄດ້ຜ່ານເສັ້ນທາງແຫ່ງກາງເຂນ ເພື່ອເດີນຕາມພຣະເຢຊູເຈົ້າໄປ. ຍ້ອນມີແຕ່ເສັ້ນທາງແຫ່ງກາງເຂນຂອງພຣະເຢຊູເຈົ້າເທົ່ານັ້ນທີ່ຈະພາພວກເຮົາໄປສູ່ຊີວິດ ອັນແມ່ນຊີວິດຮ່ວມກັບພຣະອົງໃນສີມຸງຄຸນ. ນັກບຸນເປົາໂລໄດ້ກ່າວໃນບົດອ່ານທີສອງວ່າ:*« ຖ້າພວກເຮົາປະພຶດເປັນສັດຕູຕໍ່ກາງເຂນຂອງພຣະກຣິສໂຕເຈົ້າແລ້ວ, ຈຸດໝາຍປາຍທາງຂອງພວກເຮົາແມ່ນຄວາມພິນາດ »* (ຟລ 3, 18-19). ແຕ່ຖ້າພວກເຮົາຮ່ວມທຸກພ້ອມກັບພຣະອົງແລ້ວ *« ພຣະອົງຈະປ່ຽນຮ່າງກາຍອັນໜ້າສົງສານຂອງພວກເຮົານີ້ ດ້ວຍທໍາໃຫ້ຄ້າຍຄືກັບພຣະກາຍອັນຮຸ່ງເຮືອງຂອງພຣະອົງ »* (ຟລ 3, 21).

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນກໍາລັງໃຈແລະຄວາມຫວັງໃຫ້ພວກເຮົາແຕ່ລະຄົນໃນການສືບຕໍ່ປະຕິບັດກິດຈະສັດທາທີ່ພວກເຮົາໄດ້ຕັ້ງໃຈໄວ້ໃນຕອນຕົ້ນກໍານົດບໍາເພັນສິນນີ້ໃຫ້ສໍາເລັດ. ເພື່ອວ່າວັນໜຶ່ງພຣະເຢຊູເຈົ້າຈະໄດ້ປ່ຽນຮ່າງກາຍອັນຕາຍເປັນຂອງພວກເຮົາໃຫ້ເປັນຮ່າງກາຍທີ່ຮຸ່ງເຮືອງເໝືອນກັບພຣະອົງ ອັນແມ່ນຊີວິດນິລັນດອນຮ່ວມກັບພຣະອົງໃນເມືອງສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ